**ມິຊຊາອາທິດທີ 19 ກຳນົດທຳມະດາ**

**ວັນທີ 7 ສິງຫາ 2022**



**ພຣະວໍລະສານໂດຍນັກບຸນລູກາ 12, 35-40**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກລູກສິດວ່າ: ຈົ່ງມັດແອວໃຫ້ແໜ້ນແລະຖືຕະກຽງໄຕ້ຮຸ່ງຢູ່. ພວກເຈົ້າເປັນດັ່ງຄົນໃຊ້ທີ່ຄອງຖ້ານາຍຫລົບມາຈາກງານວິວາຫະມຸງຄຸນເພື່ອໄຂຮັບເມື່ອນາຍມາຮອດແລະເຄາະປະຕູ. ບຸນມະຫາລາບແກ່ພວກຄົນໃຊ້ທີ່ນາຍເຫັນເຝົ້າຄອຍຢູ່ເມື່ອເວລານາຍຫລົບມາ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ນາຍຈະມັດແອວເພິ່ນເອງ, ຈະບອກພວກຄົນໃຊ້ເຂົ້ານັ່ງໂຕະແລ້ວຍ່າງໄປຮັບໃຊ້ພວກເຂົາ. ບຸນມະຫາລາບແກ່ພວກຄົນໃຊ້ທີ່ນາຍຈະເຫັນເຝົ້າຄອຍຢູ່ເມື່ອເວລານາຍຫລົບມາຈະເປັນເວລາເດິກດາຍທ້າຍຄືນແລ້ວກໍຕາມ. ພວກເຈົ້າຈົ່ງຮູ້ໄວ້ເຖີດວ່າ, ຖ້າເຈົ້າເຮືອນຮູ້ຈັກວ່າເວລາໃດຜູ້ຮ້າຍຈະມາ, ເຂົາຄົງຈະເຝົ້າຮັກສາບໍ່ໃຫ້ຜູ້ຮ້າຍເຈາະເຮືອນເຂົາໄດ້. ພວກເຈົ້າກໍດັ່ງດຽວກັນ, ຈົ່ງຕຽມພ້ອມສະເໝີ, ຍ້ອນວ່າບຸດມະນຸດຈະສະເດັດມາໃນເວລາພວກເຈົ້າບໍ່ນຶກບໍ່ຝັນນັ້ນແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

## ບົດແບ່ງປັນ

ວາຈາຂອງພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້ຢູ່ໃນບໍລິບົດຂອງຄຳເທດສອນກ່ຽວກັບອານາຈັກສະຫວັນ. ວັນນີ້ພຣະເຢຊູເຈົ້າບອກສອນພວກເຮົາໃຫ້ຮູ້ຈັກຕື່ນເຝົ້າເໝືອນດັ່ງຄົນໃຊ້ທີ່ມັດແອວແລະຖືຕະກຽງໄຕ້ຮຸ່ງຢູ່. ໝາຍວ່າຈົ່ງຕື່ນເຝົ້າແລະຕຽມພ້ອມຢູ່ສະເໝີ. ຕື່ນເຝົ້າເພື່ອຫຍັງ? ເພື່ອລໍຖ້ານາຍກັບມາຈາກງານດອງ. ແລະຄຳຖາມທີ່ຕາມມາກໍຄື ອານາຈັກສະຫວັນແລະນາຍທີ່ກັບມາຈາກງານດອງນີ້ມີຄວາມກ່ຽວພັນກັນຢ່າງໃດ? ການຕື່ນເຝົ້າແລະການຊອກສະແຫວງຫາອານາຈັກຂອງພຣະເຈົ້າເປັນສິ່ງດຽວກັນບໍ? ພວກເຮົາຈະພ້ອມກັນຊອກຫາຄຳຕອບຂອງຄຳຖາມເຫລົ່ານີ້ໃນວາຈາພຣະເຈົ້າ.

ຖ້າຄົນໃຊ້ຮູ້ຈັກເວລາທີ່ນາຍຈະກັບມາເຂົາກໍບໍ່ຈຳເປັນຕ້ອງຕື່ນເຝົ້າ. ແລະຖ້ານາຍຮູ້ຈັກເວລາໃດງານລ້ຽງຈະສິ້ນສຸດລົງ, ຄົນໃຊ້ກໍບໍ່ຕ້ອງລໍຖ້ານາຍ, ເພາະນາຍໄດ້ບອກເຂົາລ່ວງໜ້າແລ້ວ. ແຕ່ຍ້ອນຄົນໃຊ້ບໍ່ຮູ້ຈັກເວລາແລະນາຍເອງກໍບໍ່ຮູ້ຈັກເຊັ່ນດຽວກັນ, ດັ່ງນັ້ນສິ່ງທີ່ຄົນໃຊ້ຕ້ອງກະທຳຄືຕ້ອງຕື່ນເຝົ້າຢູ່ສະເໝີ. ແຕ່ຕ້ອງຕື່ນເຝົ້າຢ່າງໃດ? ການຕື່ນເຝົ້າບໍ່ໝາຍວ່າບໍ່ທຳໜ້າທີ່ວຽກງານຂອງຕົນທີ່ໄດ້ຮັບມອບໝາຍຈາກເຈົ້ານາຍ. ການຕື່ນເຝົ້າບໍ່ໝາຍວ່າຕ້ອງຢູ່ໃນຄວາມກັງວົນແລະຢ້ານກົວ. ແຕ່ການຕື່ນເຝົ້າຄືການຕຽມພ້ອມທີ່ຈະພົບນາຍ. ຖ້າພວກເຮົາທຳໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍບໍ່ສຳເລັດ, ພວກເຮົາກໍບໍ່ພ້ອມທີ່ຈະພົບນາຍ. ຖ້າພວກເຮົາມົວເມົາແຕ່ນຳການກິນການດື່ມແລະມ່ວນຊື່ນລື່ນເລີງ, ແນ່ນອນພວກເຮົາກໍບໍ່ພ້ອມທີ່ຈະພົບນາຍເໝືອນກັນ. ຖ້າພວກເຮົາຄິດວ່າຍັງອີກດົນນາຍຈຶ່ງຈະກັບມາ, ພວກເຮົາກໍບໍ່ລໍຖ້ານາຍ. ເພາະສະນັ້ນ, ການຕື່ນເຝົ້າຄືການປະຕິບັດສິ່ງທີ່ນາຍໄດ້ສັ່ງໄວ້ໃຫ້ສຳເລັດໃນແຕ່ລະຍາມ, ແຕ່ລະວັນ. ເພາະນາຍຈະກັບມາໃນເວລາທີ່ພວກເຮົາບໍ່ຮູ້ຈັກ. ເມື່ອນາຍກັບມາແລ້ວ, ແທນທີ່ຄົນໃຊ້ຈະຮັບໃຊ້ນາຍຂອງຕົນ, ຜູ້ເປັນນາຍພັດມັດແອວເພື່ອບົວລະບັດຄົນໃຊ້ຂອງຕົນ. ໝາຍວ່າ, ລາງວັນທີ່ຄົນໃຊ້ສັດຊື່ແລະຕື່ນເຝົ້ານີ້ຄືການໄດ້ເປັນມິດສະຫາຍກັບນາຍ. ແຕ່ນີ້ຕໍ່ໄປ, ເຂົາບໍ່ໄດ້ເປັນຄົນໃຊ້ອີກ, ແຕ່ເປັນໝູ່ກັບນາຍຂອງເຂົາ. ດັ່ງນັ້ນ, ເຂົາຈຶ່ງມີສິດນັ່ງຮ່ວມໂຕະກັບນາຍຂອງຕົນແລະນາຍຂອງເຂົາຈະຮັບໃຊ້ເຂົາເໝືອນກັບມິດສະຫາຍ. ແນ່ນອນ, ສິ່ງທີ່ຄົນໃຊ້ຍິນດີທີ່ສຸດຄືການໄດ້ເປັນມິດສະຫາຍກັບນາຍຂອງຕົນ. ຄວາມປຽບທຽບສອນພວກເຮົາໃຫ້ເຂົ້າໃຈວ່າ ຖ້າພວກເຮົານຳເອົາວາຈາຂອງພຣະເຈົ້າມາປະຕິບັດໃຫ້ເກີດຜົນໃນຊີວິດຂອງຕົນແຕ່ລະວັນ, ໝາກຜົນທີ່ພວກເຮົາໄດ້ຮັບຄືການເປັນມິດສະຫາຍກັບພຣະເຢຊູເຈົ້າແລະນັ່ງຮ່ວມໂຕະກັບພຣະອົງອັນແມ່ນອານາຈັກສະຫວັນນັ້ນເອງ.

## ພາວະນາ

ໂອພຣະເຈົ້າ, ໂຜດຊ່ວຍລູກໃຫ້ຮູ້ຈັກຕື່ນເຝົ້າລໍຖ້າການສະເດັດກັບມາຂອງພຣະອົງດ້ວຍຄວາມເຊື່ອແລະຄວາມຍິນດີ. ຍ້ອນລູກຈະໄດ້ເຂົ້າຮ່ວມໂຕະກັບພຣະອົງໃນອານາຈັກສະຫວັນນັ້ນແລ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ